# ຫາບາກຸກ (ຮາບາກຸກ)

ໃຈຄວາມສຳຄັນ ພົ້ນດ້ວຍຄວາມເຊື່ອ

ຂໍ້ຄວາມສຳຄັນ ໑:໑໓

ຈຳນວນບົດ ໓ ບົດ

ເຣື່ອງເກີດຂຶ້ນແຕ່ປີ ໖໑໐ ຈົນເຖິງ ປີ ໖໐໐ ກ່ອນ ຄ.ສ.

ປະຈຳປູ່ທີ່ ຢູດາ

ຈັກກະພັດທີ່ມີອຳນາດ ບາບີໂລນ

ສມັຍດຽວກັນກັບ ເຢເຣມີແລະດານຽນ (໑ ກະສັດບົດທີ ໒໔–໒໕)

ຜູ້ທຳນວາຍຄົນທີ ໑໑

## ໑. ວ່າດ້ວຍເນື້ອຄວາມ

ໜັງສື ຫາບາກຸກ ເປັນ ເໝືອນຄຳສົນທະນາ ຣະຫວ່າງ ພຣະເຈົ້າກັບ ຫາບາກຸກ. ຫາບາກຸກມີຄວາມສົນໃຈການອະທັມຂອງພວກແຫ່ງຕົນຫລາຍ. ແຕ່ເພິ່ນບໍ່ເຫັນດີທີ່ ພຣະເຈົ້າຈຶ່ງໃຊ້ຊາວການເດີລອນພວກ ຂອງພຣະອົງ. ເຣື່ອງຢໍ້ມີປາກົດດັ່ງນີ້

໑. ຫາບາກຸກສົນໃຈການອະທັມຂອງພວກຢູດາ ໑:໑–໔

໒. ພຣະເຈົ້າຊົງບອກວ່າ "ຈະໃຊ້ຊາວການເດີສອນພວກເຂົາ ໑:໕–໑໑

໓. ຫາບາກຸກບໍ່ເຫັນດີ ເພາະຄົນພວກນັ້ນ ບໍ່ຊອບທັມຫລາຍກວ່າ ພວກຢູດາ ໑:໑໒ ໑໗

໔. ຫາບາກຸກລໍຖ້າຄຳຕອບ ໒:໑–໓

໕. ພຣະເຈົ້າຈຶ່ງຕອບວ່າ ພວກຢູດາຈະຖືກໂທດເພາະດ້ວຍບາບກັມຂອງພວກເຂົາເອງ. ແລະເຮົາຈະໃຫ້ຊາວການເດທຳລາຍພວກເຂົາ ໒:໔–໒໐ ຍ້ອນການນັ້ນ ເຮົາຈະທຳລາຍຊາວການເດອີກ

໖. ຫາບາກຸກໄດ້ເຂົ້າໃຈ, ແລ້ວຈຶ່ງຕອບດ້ວຍຄຳນ້ອມເຫັນຢ່າງດີ

## ໖. ວ່າດ້ວຍຂໍ້ຄວາມສຳຄັນ

໑. ຄຳວ່າ "ຄົນຊອບທັມຈະດຳເນີນຊີວິດດ້ວຍຄວາມເຊື່ອ" ໄດ້ຂຽນໄວ້ເຖິງສາມເທື່ອໃນພຣະຄັມພີໃໝ່ຄືໃນ ໂລມ ໑:໑໗ ຄາລາຊີ ໓:໑໑ ເຮັບເຣີ ໑໐.໓໘ ຈຶ່ງເປັນຫລັກຄຳສອນອັນສຳຄັນຂອງທ່ານໄປໂລ

໒. ຄຳວ່າ "ແຜ່ນດິນໂລກຈັກເຕັມໄປດ້ວຍການຮູ້ຈັກພຣະເຢໂຮວາ" ໒:໑໔ ໄດ້ເຮັດໃຫ້ຄົນທີ່ໄປຂ່າວປະກາດມີກຳລັງໃຈດີຂຶ້ນ

໓. ຫາບາກຸກ ມີຄວາມຍິນດີ ໃນ ພຣະເຈົ້າດ້ວຍຄວາມພົ້ນຂອງເພິ່ນ ໓:໑໘

## ຈ. ການແບ່ງເປັນພາກ

ພາກທີ ໑ ການສົນທະນາລະຫວ່າງພຣະເຈົ້າກັບຮາບາກຸກ
ບົດ ໑-໒

ພາກທີ ໒ ຄຳອ້ອນວອນຂອງຮາບາກຸກ ບົດ ໓